ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ

ແຂວງຫົວພັນ

ເລກທີ .02... /ຈຂ.ຫພ

ຊຳເໜືອ, ວັນທີ..10 ມີນາ 2014

# ຄຳສັ່ງ

## ວ່າດ້ວຍການແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບໄມ້

**ເຖິງ : ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າ ອ້ອມຂ້າງແຂວງ, ຫົວໜ້າ ກອງບັນຊາການ ປກຊ-ປກສ ແລະ ບັນດາທ່ານເຈົ້າເມືອງ ໃນທົ່ວແຂວງ**

- ອີງຕາມກົດໝາຍປົກຄອງທ້ອງຖິ່ນແຫ່ງສປປລາວສະບັບເລກທີ 03 / ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ສະບັບເລກທີ 31/ນຍ, ລົງວັນທີ 5/11/2014 ວ່າດ້ວຍ ການຢຸດຕິຊົ່ວຄາວ ການຂຸດຄົ້ນໄມ້ໃນເຂດປ່າຜະລິດ.
- ອີງຕາມແຈ້ງການຂອງຫ້ອງວ່າການສູນກາງພັກສະບັບເລກທີ 61/ຫສພ, ລົງວັນທີ 6 ກຸມພາ 2014ກ່ຽວກັບທິດ ຊີ້ນຳຂອງກົມການເມືອງສູນກາງພັກ ວ່າດ້ວຍການການແກ້ໄຂສະພາບການຫຍໍ້ທໍ້ຫາໄມ້.
- ອີງຕາມ ການຄົ້ນຄ້ວາເຫັນດີໃນກອງປະຊຸມຂອງການນຳແຂວງ ຄັ້ງວັນທີ່ 6/3/2014

ເພື່ອຈັດຕັ້ງຜັນຂະຫຍາຍທິດຊີ້ນຳຂອງກົມການເມືອງສູນກາງພັກກ່ຽວກັບການແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບໄມ້ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ແຫ່ງສປປລາວ ວ່າດ້ວຍການຢຸດຕິຊົ່ວຄາວ ການຂຸດຄົ້ນໄມ້ໃນເຂດປ່າຜະລິດ; ເຊິ່ງໃນໄລຍະຜ່ານມາໄດ້ມີການລັກລອບຕັດ, ເຄື່ອນຍ້າຍໄມ້ໂດຍບໍ່ໄດ້ຮັບການອະນຸຍາດຈາກອຳນາດການປົກຄອງແຕ່ລະຂັ້ນ, ສະນັ້ນເຈົ້າແຂວງ ແຂວງຫົວພັນຈຶ່ງອອກຄຳສັ່ງດັ່ງນີ້:

1. ຫ້າມບໍ່ໃຫ້ພາກທຸລະກິດ ຫຼື ບຸກຄົນໃດໜຶ່ງເກັບຊື້ໄມ້ຫວງຫ້າມທີ່ຕົກຄ້າງຢູ່ນຳປະຊາຊົນໃນຂອບເຂດທົ່ວແຂວງຫົວພັນເພາະຈະເປັນການສ້າງເງື່ອນໄຂໃຫ້ມີການລັກລອບທຳລາຍປ່າໄມ້ຂອງພວກຄົນບໍ່ດີຫຼາຍຂຶ້ນຕື່ມ
2. ໃຫ້ຢຸດຕິຊົ່ວຄາວການຂຸດຄົ້ນໄມ້ໃນເຂດປ່າຜະລິດ ເລີ້ມແຕ່ສົກປີ 2013-2014 ເປັນຕົ້ນໄປ, ບໍ່ອະນຸຍາດໃຫ້ພະແນກການ, ເມືອງ ແລະ ພາກສ່ວນກ່ຽວຂ້ອງ ອອກອະນຸຍາດຂຸດຄົ້ນ ແລະ ເກັບກູ້ໄມ້ຢູ່ໃນເຂດປ່າຜະລິດ ຢ່າງເດັດຂາດ.
3. ບໍ່ເຫັນດີໃຫ້ສົ່ງໄມ້ທ່ອນ, ໄມ້ຕັບ, ໄມ້ເລື່ອຍ, ຕໍໄມ້, ປູດໄມ້, ໄມ້ເຄິ່ງສຳເລັດຮູບແລະໄມ້ປະດັບອອກຕ່າງປະເທດ. ໃຫ້ປຸງແຕ່ງເປັນຜະລິດຕະພັນແລ້ວຈຶ່ງສົ່ງອອກແລະບໍ່ໃຫ້ບັນດາພະແນກການ, ເມືອງຕ່າງໆອີງໃສ່ການຂຸດຄົ້ນຊັບພະຍາກອນໄມ້ເພື່ອສ້າງລາຍຮັບ.
4. ໃນກໍລະນີກວດກາແລະເຫັນວ່າພະແນກການ, ເມືອງ, ກຸ່ມບ້ານ, ບ້ານ, ບຸກຄົນ ແລະ ພາກສ່ວນໃດໜຶ່ງໃດໃຫ້ການສົມຮູ້ຮ່ວມຄິດເພື່ອຂຸດຄົ້ນແລະຊື້-ຂາຍໄມ້ແບບຜິດກົດໝາຍແມ່ນຈະຖືກດຳເນີນການສຳຫຼວດກວດກາລົງວິໄນຢ່າງເຂັ້ມງວດ ແລ້ວດຳເນີນຕາມລະບຽບກົດໝາຍ.
5. ໃນກໍລະນີພົບເຫັນການລັກລອບຕັດໄມ້, ເຄື່ອນຍ້າຍ ແລະສົ່ງອອກໄມ້ ປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກລັດ ແມ່ນໃຫ້ເຈົ້າໜ້າທີ່ກ່ຽວຂ້ອງກວດກາ ແລ້ວລາຍງານໃຫ້ການນຳແຂວງຮັບຊາບທັນເວລາ ເພື່ອດຳເນີນຕາມລະບຽບກົດໝາຍ.

6. ໃຫ້ແຕ່ລະພະແນກການ, ພາກສ່ວນທີ່ກ່ຽວຂ້ອງດຳເນີນການກວດກາດ່ານຊາຍແດນຕ່າງໆໃນຂອບເຂດຄວາມຮັບຜິດຊອບຂອງຕົນແລະຖ້າເຫັນວ່າເຈົ້າໜ້າທີ່ປະຈຳດ່ານ ຫຼື ບຸກຄົນໃດໜຶ່ງ ມີການສົມຮູ້ຮ່ວມຄິດ ແລະອະນຸຍາດໃຫ້ນຳໄມ້ອອກແບບຜິດລະບຽບກົດໝາຍແມ່ນໃຫ້ດຳເນີນການສຳຫຼວດກວດກາລົງວິໄນ, ຍົກຍ້າຍພະນັກງານທີ່ກະທຳຜິດດັ່ງກ່າວ ແລະ ປະຕິບັດຕາມລະບຽບກົດໝາຍ.
7. ໃຫ້ກວດກາບັນດາໂຮງງານປຸງແຕ່ງໄມ້ແລະໂຮງງານເຟີນີເຈີໃນຂອບເຂດຕົນເອງຮັບຜິດຊອບຖ້າບ່ອນໃດບໍ່ໄດ້ມາດຖານແມ່ນໃຫ້ຢຸດເຊົາກິດຈະການຢ່າງຂາດຕົວ.
8. ສຳລັບພໍ່ຄ້າ-ນັກທຸລະກິດທັງພາຍໃນແລະຕ່າງປະເທດທີ່ດຳເນີນທຸລະກິດຊື້-ຂາຍ ແລະ ຂຸດຄົ້ນໄມ້ແບບຜິດກົດໝາຍແມ່ນໃຫ້ດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.
9. ມອບຄວາມຮັບຜິດຊອບໃຫ້ບັນດາທ່ານເຈົ້າເມືອງໃນທົ່ວແຂວງ, ພະແນກການ ແລະ ພາກສ່ວນກ່ຽວຂ້ອງເພີ່ມທະວີຄວາມຮັບໃຈໃສ່ໃນການຄຸ້ມຄອງປ່າໄມ້ແລະເປັນເຈົ້າການສຶກສາອົບຮົມນັກທຸລະກິດ, ພໍ່ຄ້າຊາວຂາຍແລະປະຊາຊົນບໍ່ໃຫ້ເຂົ້າຮ່ວມໃນຂະບວນການຂຸດຄົ້ນໄມ້ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.
10. ມອບໃຫ້ກອງບັນຊາການປກຊ-ປກສເປັນເຈົ້າການເຂົ້າຮ່ວມໃນການກວດກາ, ຄຸ້ມຄອງໄມ້ປະເພດຕ່າງໆ ທີ່ຄົນບໍ່ດີລັກລອບຕັດ,ເຄື່ອນຍ້າຍແລະສົ່ງອອກ ທີ່ບໍ່ໄດ້ຮັບການອະນຸຍາດຈາກພາກລັດເປັນທາງການ.

ດັ່ງນັ້ນ, ເຈົ້າແຂວງຫົວພັນຈຶ່ງມີຄຳສັ່ງສະບັບນີ້ມາຍັງບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການ, ອົງການທຽບເທົ່າ, ກອງບັນຊາການທະຫານ-ຕຳຫຼວດໃຫ້ຈັດຕັ້ງເຜີຍແຜ່ເນື້ອໃນທິດຊີ້ນຳຂອງຂັ້ນເທິງໃຫ້ທົ່ວເຖິງແລ້ວພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

**ເຈົ້າແຂວງຫົວພັນ**

ຄຳຮຸ່ງ ເຮືອງວົງສີ

**ບ່ອນນຳສົ່ງ:**

- ບັນດາພະແນກການ, ອົງການທຽບເທົ່າບ່ອນລະ01 ສະບັບ.
- ບັນດາເມືອງທົ່ວແຂວງບ່ອນລະ01 ສະບັບ.
- ສຳເນົາ02 ສະບັບ.